## ວິງຈອນກິດຈະກຳ ຂອງ ທລຍ

*ຊາວບ້ານເປັນຜູ້ວາງແຜນ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງຮັກສາ ດ້ວຍຕົນເອງ ໃນການພັດທະນາກິດຈະກຳຕ່າງໆ.*

*ກອງປະຊຸມ ຂັ້ນບ້ານ*

ການຈັດລຽງຄວາມຕ້ອງການພື້ນຖານ

⇓

*ກອງປະຊຸມຄັດເລືອກບູລິມະສິດ ຂັ້ນເຂດ*

ການຈັດລຽງຄວາມຕ້ອງການ ຂັ້ນບ້ານ

⇓

*ກອງປະຊຸມຄັດເລືອກບູລິມະສິດ ຂັ້ນເມືອງ*

ການຈັດລຽງຄວາມຕ້ອງການ ຂັ້ນເຂດ

ໂດຍຮ່ວມມືປະສານກັບພາກສ່ວນອື່ນໆ

⇓

ປະເມີນ ແລະ ອອກແບບໂຄງການຍ່ອຍ

⇓

*ກອງປະຊຸມຮັບຮອງການອອກແບບ ແລະ ງົບປະມານ ຂັ້ນເຂດ*

⇓

*ກອງປະຊຸມຕັດສິນຄັ້ງສຸດທ້າຍ ຂັ້ນເມືອງ*

⇓

ຝຶກອົບຮົມ/ກະກຽມການຈັດຕັ້ງປະຕິບັດ

⇓

ຈັດຕັ້ງປະຕິບັດ

⇓

ດູແລຮັກສາ



## ຂັ້ນຕອນການຈັດຕັ້ງປະຕິບັດ ຂອງ ທລຍ

ສາມແຂວງເປົ້າໝາຍທີ່ຖືກຄັດເລືອກໃນເບື້ອງຕົ້ນ :

| ແຂວງ | 2003 | 2004 | 2005 | 2006 | 2007 | ລວມ |
|---|---|---|---|---|---|---|
| ຫົວພັນ | 3 | 3 | 5 | 8 | 8 | 8 |
| ສະຫວັນນະເຂດ | 3 | 3 | 3 | 4 | 4 | 4 |
| ຈຳປາສັກ | 4 | 4 | 4 | 4 | 4 | 4 |
| ແຂວງທີ່ 4 | - | 2 | 4 | 4 | 4 | 4 |
| ແຂວງທີ່ 5 | - | 2 | 4 | 4 | 4 | 4 |
| ຈຳນວນເມືອງ | 10 | 14 | 20 | 24 | 24 | 24 |

## ສຳນັກງານຕັ້ງຢູ່ທີ່


**ຄະນະກຳມະການແຜນການ ແລະ ການຮ່ວມມື**

**ຖະໜົນຫລວງພະບາງ, ຕູ້ ປ.ນ 4625**

**ກຳແພງນະຄອນວຽງຈັນ, ສປປ ລາວ**

ໂທ : 021-261 476, 261 479, 261 480

ແຟັກສ໌ : 021-261 481

ອີເມລ : prflao@laotel.com
prfhp@laotel.com
prfsv@laotel.com
prfchp@laotel.com


# ກອງທຶນຫລຸດຜ່ອນຄວາມທຸກຍາກ

# (ທລຍ)



ການແກ້ໄຂຄວາມທຸກຍາກ

ແມ່ນໜ້າທີ່ຂອງໝົດທຸກຄົນ

## ປະຫວັດຄວາມເປັນມາ ຂອງ ທລຍ

ທ່າມກາງຄວາມພະຍາຍາມທີ່ມີຫົວຄິດປະດິດສ້າງ ຂອງ ລັດຖະບານແຫ່ງ ສປປ ລາວ, ກອງທຶນຫລຸດຜ່ອນຄວາມທຸກຍາກ ໄດ້ຖືກສ້າງຕັ້ງຂຶ້ນ ຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 073/ນຍ ລົງວັນທີ 31 ພຶດສະພາ 2002 ເພື່ອສະໜັບສະໜູນນຶ່ງໃນບັນດາເປົ້າໝາຍທີ່ສຳຄັນ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ນະໂຍບາຍຂອງລັດຖະບານ ໃນການລົບລ້າງຄວາມທຸກຍາກໃນປະເທດ ແລະ ນຳພາປະເທດໃຫ້ຫລຸດພົ້ນອອກຈາກສະພາບດ້ອຍພັດທະນາ ໃນປີ 2020.

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ຈະເປັນຜູ້ສະໜອງປັດໃຈ ເພື່ອພັດທະນາໝູ່ບ້ານເປົ້າໝາຍ ທີ່ນອນຢູ່ໃນບັນດາຕົວເມືອງທີ່ທຸກຍາກ ຂອງປະເທດ, ໂດຍຜ່ານຂະບວນການຕັດສິນໃຈແບບມີສ່ວນຮ່ວມທີ່ຫ້າວຫັນຂອງຊຸມຊົນ.



## ຈຸດປະສົງ ຂອງ ທລຍ

- ສ້າງຂີດຄວາມສາມາດເພື່ອມອບສິດໃຫ້ຊາວບ້ານທຸກຍາກເປັນຜູ້ວາງແຜນ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງທຸກການລົງທຶນຢູ່ໃນໝູ່ບ້ານດ້ວຍຕົນເອງ ຕາມຮູບແບບການແບ່ງຂັ້ນຄຸ້ມຄອງ ແລະ ຄວາມໂປ່ງໃສເປັນຫລັກ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ, ສະໜັບສະໜູນຂະບວນການຕັດສິນໃຈ ແລະ ການແກ້ໄຂຂໍ້ຂັດແຍ່ງແບບມີສ່ວນຮ່ວມຕັ້ງແຕ່ຂັ້ນບ້ານ, ເຂດ ແລະ ເມືອງ ໂດຍໃຫ້ມີສ່ວນກ່ຽວຂ້ອງຢ່າງກ້ວາງຂວາງ ຂອງຊາວບ້ານ, ເພດຍິງ ແລະ ຊົນເຜົ່າສ່ວນນ້ອຍ.
- ຊ່ວຍເຫລືອຊາວບ້ານ ໃນການພັດທະນາໂຄງລ່າງຂະໜາດນ້ອຍ ແລະ ໃຫ້ເຂົາເຈົ້າໄດ້ຮັບການບໍລິການດ້ານຕ່າງໆຕາມຄວາມຈຳເປັນ ແລະ ເໝາະສົມ.

## ຫລັກການພື້ນຖານ ຂອງ ທລຍ

ກອງທຶນຫລຸດຜ່ອນຄວາມທຸກຍາກມີ 7 ຫລັກການສຳຄັນຄື :

1. *ຄວາມງ່າຍດາຍ :*
   ຮູບແບບເຕັກນິກການກໍ່ສ້າງແມ່ນງ່າຍດາຍ ປະຊາຊົນສາມາດເຮັດເອງໄດ້ ໂດຍອີງໃສ່ຄວາມຕ້ອງການ ແລະ ທ່າແຮງຂອງຊາວບ້ານ.
2. *ທາງເລືອກຂອງບ້ານ :*
   ມີຫລາຍໆຢ່າງທີ່ມີຄວາມຈຳເປັນ, ມີຫລາຍໂຄງການນ້ອຍທີ່ສາມາດໃຫ້ໄດ້ ຖ້າຫາກວ່າຊາວບ້ານຕັດສິນໃຈ ເລືອກເອົາເອງ, ແຕ່ບາງໂຄງການກໍ່ສ້າງບໍ່ສາມາດອະນຸຍາດໃຫ້ໄດ້.
3. *ການມີສ່ວນຮ່ວມ* :
   ຊາວບ້ານ ຈະໄດ້ໃຫ້ການຮ່ວມມືກັບກອງທຶນ ແລະ ປະກອບສ່ວນດ້ານວັດຖຸ, ແຮງງານ ແລະ ອື່ນໆ ພ້ອມທັງສະໝັກໃຈເຂົ້າຮ່ວມໃນການເຮັດວຽກກັບໂຄງການ ທລຍ.
4. *ການເປັນເຈົ້າການ :*
   ຊາວບ້ານຈະຕ້ອງເປັນເຈົ້າການ ໃນການວາງແຜນ, ຈັດຕັ້ງປະຕິບັດ, ປົກປັກຮັກສາ ແລະ ຄຸ້ມຄອງດ້ວຍຕົນເອງ.
5. *ຄວາມໂປ່ງໃສ ແລະ ສາມາດກວດສອບໄດ້ :*
   ສະຫລຸບ, ເຜີຍແຜ່ລາຍຮັບລາຍຈ່າຍ ຢູ່ທຸກກອງປະຊຸມ. ມີກະດານຂ່າວຂອງບ້ານເພື່ອຕິດແຈ້ງຂ່າວການເຄື່ອນໄຫວໃຫ້ໝົດທຸກຄົນຮັບຮູ້ ແລະ ຕິດຕາມໄດ້.



6. *ການລົງທຶນທີ່ກຸ້ມຄ່າ :*
   ຈັດແບ່ງທຶນໃຫ້ສອດຄ່ອງ ກັບສະພາບຄວາມທຸກຍາກຕົວຈິງຂອງບ້ານ, ຜູ້ທຸກຍາກ ໄດ້ຮັບຜົນປະໂຫຍດ ຈາກໂຄງການ, ໂຄງການມີຄວາມຍືນຍົງ ແລະ ໃຊ້ໄດ້ແບບກຸ້ມຄ່າ.
7. *ຄວາມເຫັນອົກເຫັນໃຈ :*
   ໃຫ້ການຊ່ວຍເຫລືອ ແລະ ເຫັນອົກເຫັນໃຈປະຊາຊົນຜູ້ທຸກຍາກຂາດເຂີນໃນບ້ານ ແລະ ຢູ່ຄຽງບ່າຄຽງໄຫລ່ກັບພວກເຂົາເຈົ້າ.